ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 0314/ກປ

ນະຄອນຫຼວງວຽງຈັນ, ວັນທີ 25/02/20

# ຂໍ້ຕົກລົງ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
## ຂອງກອງຄຸ້ມຄອງອຸທິຍານແຫ່ງຊາດ ນາກາຍ-ນໍ້າເທີນ

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 99/ນຍ, ລົງວັນທີ 09 ມີນາ 2017;
- ອີງຕາມ ດຳລັດ ວ່າດ້ວຍອົງການຄຸ້ມຄອງ ແລະ ປົກປັກຮັກສາເຂດແຫຼ່ງນໍ້າ ນໍ້າເທີນ 2 ສະບັບເລກທີ 122/ນຍ, ລົງວັນທີ 21 ເມສາ 2017;
- ອີງຕາມ ດຳລັດ ວ່າດ້ວຍການສ້າງຕັ້ງອຸທິຍານແຫ່ງຊາດ ນາກາຍ-ນໍ້າເທີນ ສະບັບເລກທີ 36/ນຍ, ລົງວັນທີ 15 ກຸມພາ 2019;
- ອີງຕາມ ໜັງສືສະເໜີ ຂອງກົມປ່າໄມ້ ສະບັບເລກທີ 0320/ກປມ, ລົງວັນທີ 22 ມັງກອນ 2020;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 0324/ກຈພ, ລົງວັນທີ 19 ກຸມພາ 2020.

**ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກອງຄຸ້ມຄອງອຸທິຍານແຫ່ງຊາດ ນາກາຍ-ນໍ້າເທີນ ແນໃສ່ຈັດຕັ້ງຜັນຂະຫຍາຍ ແນວທາງນະໂຍບາຍ ຂອງພັກ, ປະຕິບັດກົດໝາຍ ແລະ ລະບຽບການຂອງລັດ ໃນການຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຢູ່ໃນອຸທິຍານ ແຫ່ງຊາດ ນາກາຍ ນໍ້າເທີນ ໃຫ້ມີຄວາມຍືນຍົງ ໄປຄຽງຄູ່ກັບການພັດທະນາ ຊີວິດການເປັນຢູ່ ແລະ ການປົກປັກຮັກສາ ຮີດຄອງປະເພນີອັນດີງາມ ຂອງປະຊາຊົນບັນດາເຜົ່າ ທີ່ດຳລົງຊີວິດຢູ່ໃນ ແລະ ອ້ອມຮອບ ອຸທິຍານແຫ່ງ ຊາດ ນາກາຍ-ນໍ້າເທີນ.

ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ກອງຄຸ້ມຄອງອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ຂຽນເປັນຕົວອັກສອນຫຍໍ້ວ່າ "ກອຊ.ນທ" ແມ່ນກົງຈັກໜຶ່ງ ຂອງກະຊວງກະສິກຳ ແລະ ປ່າໄມ້ ຊຶ່ງຕັ້ງຢູ່ຂັ້ນທ້ອງຖິ່ນ ພາຍໃຕ້ການຊີ້ນຳດ້ານວິຊາການ ຂອງກົມປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ ທີ່ກ່ຽວຂ້ອງ ໃນການຄຸ້ມຄອງປ່າໄມ້, ທີ່ດິນ ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ໃຫ້ມີຄວາມຍືນຍົງ ລວມທັງການປະສານງານຮ່ວມກັບອຳນາດການ ປົກຄອງທ້ອງຖິ່ນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງ ເພື່ອເຮັດສຳເລັດໜ້າທີ່ການເມືອງ ຂອງຕົນ ຢ່າງມີ ປະສິດທິພາບ ແລະ ປະສິດທິຜົນສູງ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

ມາດຕາ 3 ໜ້າທີ່

1. ປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດ, ລັດຖະບັນຍັດ, ດຳລັດ, ມະຕິຂອງລັດຖະບານ, ຂໍ້ຕົກລົງ, ຄຳສັ່ງ, ແຈ້ງການ, ຄຳແນະນຳ ແລະ ນິຕິກຳອື່ນ ຂອງຂັ້ນເທິງວາງ ອອກ;
2. ຄົ້ນຄວ້າ, ຜັນຂະຫຍາຍ ແນວທາງນະໂຍບາຍຂອງພັກ, ແຜນຍຸດທະສາດ ຂອງຂະແໜງກະສິກຳ ແລະ ປ່າໄມ້ ມາເປັນແຜນງານ ແລະ ໂຄງການສະເພາະ ຂອງຕົນ ພ້ອມທັງຄຸ້ມຄອງ ແລະ ຈັດຕັ້ງ ປະຕິບັດ ໃຫ້ໄດ້ຮັບຜົນດີ;
3. ຄຸ້ມຄອງສະຖິຕິ ແລະ ຊີວະປະຫວັດ ຂອງພະນັກງານ-ລັດຖະກອນ, ຊ່ຽວຊານ ພາຍໃນ ແລະ ຕ່າງ ປະເທດ ທີ່ຂຶ້ນກັບກອງອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ເພື່ອເປັນຖານຂໍ້ມູນ ດ້ານບຸກຄະລາກອນ ພ້ອມທັງ ຊຸກຍູ້, ສົ່ງເສີມ ບົດບາດ ຍິງ-ຊາຍ, ພັດທະນາຄວາມກ້າວໜ້າ ຂອງແມ່ຍິງ ແລະ ແມ່-ເດັກ, ຄວາມສະເໝີພາບ ຂອງບັນດາເຜົ່າ ໃນການປະຕິບັດນະໂຍບາຍດ້ານຕ່າງໆ;
4. ຄົ້ນຄວ້າ, ນຳສະເໜີ ແລະ ປັບປຸງກົງຈັກການຈັດຕັ້ງ ພ້ອມທັງກຳນົດຕຳແໜ່ງງານໃຫ້ຄົບຖ້ວນ, ສ້າງ ແຜນກຳນົດພະນັກງານ ນຳພາ-ຄຸ້ມຄອງ ແລະ ແຜນບຳລຸງກໍ່ສ້າງ ພະນັກງານ-ລັດຖະກອນ ໃນແຕ່ລະ ໄລຍະ ພ້ອມທັງ ບັນຈຸ-ສັບຊ້ອນ ບຸກຄະລາກອນ ຕາມຂັ້ນຂອງຕົນ;
5. ຄົ້ນຄວ້າ ແລະ ຈັດຕັ້ງຜັນຂະຫຍາຍ ບັນດາລະບຽບການ ແລະ ຄູ່ມື ທາງດ້ານເຕັກນິກວິຊາການ ຂອງ ພາຍໃນ ແລະ ສາກົນ ທີ່ຕິດພັນກັບການຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ໃຫ້ມີຄວາມຍືນຍົງ;
6. ຄົ້ນຄວ້າ ແລະ ກຳນົດຮູບແບບ ການພັດທະນາຊີວິດການເປັນຢູ່ ຄຽງຄູ່ກັບການອະນຸລັກ ໃຫ້ແກ່ບ້ານ ທີ່ຢູ່ໃນ ແລະ ອ້ອມຂ້າງ ອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ເພື່ອສ້າງເປັນບ້ານພັດທະນາດ້ານ ກະສິ ກຳ ແລະ ປ່າໄມ້ ຕິດພັນກັບ ການອະນຸລັກຊີວະນາໆ ພັນ ໃຫ້ມີຄວາມຍືນຍົງ;
7. ເປັນເຈົ້າການ ເກັບກຳ, ວິໄຈ, ສັງລວມ, ສ້າງ ແລະ ຄຸ້ມຄອງ ຂໍ້ມູນ-ຂ່າວສານ ກ່ຽວກັບທີ່ດິນປ່າໄມ້, ປ່າໄມ້ ແລະ ຊັບພະຍາກອນປ່າໄມ້, ຖິ່ນທີ່ຢູ່ອາໄສສຳຄັນ ຂອງຊະນິດພັນພືດ ແລະ ສັດປ່າທີ່ຫາຍາກ, ໃກ້ຈະສູນພັນ ເພື່ອສ້າງເປັນຖານຂໍ້ມູນ, ສູນຮຽນຮູ້ ໃຫ້ແກ່ການສຶກສາ ຄົ້ນຄວ້າ ກ່ຽວກັບການຄຸ້ມ ຄອງ, ອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ໃຫ້ມີຄວາມຍືນຍົງ;
8. ເປັນເຈົ້າການ ປຸກລະດົມ ຂົນຂວາຍ, ໂຄສະນາ ເຜີຍແຜ່ ກົດໝາຍ, ລະບຽບການ ເພື່ອປຸກຈິດສຳນຶກ ແລະ ສ້າງຄວາມເຂັ້ມແຂງ ໃຫ້ແກ່ປະຊາຊົນ ພ້ອມທັງ ຊຸກຍູ້ອຳນາດການປົກຄອງບ້ານ, ກຸ່ມບ້ານ ໃນ

ການສ້າງຕັ້ງກຸ່ມວຽກ ເພື່ອຄຸ້ມຄອງປ່າໄມ້ຂັ້ນບ້ານ ແລະ ກຸ່ມບ້ານ ລວມທັງການອອກລະບຽບການຄຸ້ມຄອງ ທີ່ດິນປ່າໄມ້, ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແບບມີສ່ວນຮ່ວມ;

9. ເປັນເຈົ້າການ ປະສານສົມທົບກັບ ຂະແໜງການສາຍຕັ້ງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອດໍາເນີນການ ສໍາຫຼວດ, ເກັບກໍາຂໍ້ມູນ, ກໍານົດເຂດແດນ, ວາງແຜນນໍາໃຊ້ທີ່ດິນ ແລະ ປ່າໄມ້ ໃນການກໍານົດ ແຜນຈັດສັນ ແຕ່ລະໄລຍະ ໃຫ້ລະອຽດ ເຊັ່ນ: ເຂດຫວງຫ້າມເດັດຂາດ, ເຂດຄຸ້ມຄອງການນໍາໃຊ້ ແລະ ເຂດກັນຊົນ ລວມທັງເຂດເປົ້າໝາຍ ເພື່ອການພັດທະນາ ຂອງລັດຖະບານ;

10. ຄົ້ນຄວ້າ ແລະ ປະກອບຄໍາເຫັນ ກ່ຽວກັບ ການສະເໜີ ຂໍດໍາເນີນກິດຈະການສຶກສາ ຄົ້ນຄວ້າ ກ່ຽວກັບ ຊັບພະຍາກອນປ່າໄມ້, ສັດນໍ້າ - ສັດປ່າ ແລະ ແຫຼ່ງທ່ອງທ່ຽວທໍາມະຊາດ ເພື່ອຈຸດປະສົງ ການອະນຸລັກສິ່ງແວດລ້ອມ;

11. ເປັນເຈົ້າການ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການ ຄຸ້ມຄອງ, ຕິດຕາມ, ກວດກາສະຖານທີ່, ກິດຈະກໍາການທ່ອງທ່ຽວທໍາມະຊາດ ຢູ່ໃນ ອຸທິຍານແຫ່ງຊາດ ນາກາຍ-ນໍ້າເທີນ ເພື່ອໃຫ້ປະຕິບັດຕາມ ກົດໝາຍ, ລະບຽບການ ແລະ ສັນຍາ ທີ່ຂັ້ນເທິງວາງອອກ;

12. ເປັນເຈົ້າການ ຊຸກຍູ້ ແລະ ສົ່ງເສີມວຽກງານກ້າເບ້ຍ, ປູກໄມ້, ຟື້ນຟູປ່າ ແບບທໍາມະຊາດ ແລະ ເຄື່ອງປ່າຂອງດົງ ຕາມແຜນຈັດສັນ, ຄຸ້ມຄອງ ໃຫ້ມີຄວາມຍືນຍົງ ເພື່ອປົກປັກຮັກສາຖິ່ນທີ່ຢູ່ອາໄສສໍາຄັນຂອງຊະນິດພັນພືດ, ພັນສັດປ່າ ທີ່ຫາຍາກ ແລະ ໃກ້ຈະສູນພັນ;

13. ສຶກສາ ທ່າແຮງ ແລະ ຄວາມຕ້ອງການ ຂອງບ້ານ ກ່ຽວກັບການນໍາໃຊ້ໄມ້ ຕາມປະເພນີ, ໄມ້ພະລັງງານ ແລະ ເຄື່ອງປ່າຂອງດົງ ເພື່ອສາທາລະນະປະໂຫຍດ ແລະ ປັບປຸງຊີວິດການເປັນຢູ່ ຂອງປະຊາຊົນບັນດາເຜົ່າ ແນໃສ່ສ້າງແຫຼ່ງລາຍຮັບເພີ່ມ ທີ່ຕິດພັນກັບການຈັດສັນອາຊີບຄົງທີ່ ໃຫ້ຄອບຄົວພ້ອມທັງ ຊຸກຍູ້, ຕິດຕາມ, ກວດກາ ປະເມີນການຈັດຕັ້ງປະຕິບັດແຜນການນໍາໃຊ້ ແລະ ລະບຽບການທີ່ໄດ້ກໍານົດໃຫ້ແຕ່ລະບ້ານ ແລະ ກຸ່ມບ້ານ;

14. ເປັນເຈົ້າການຈັດຕັ້ງປະຕິບັດວຽກງານ ປັກຫຼັກໝາຍ, ຕິດຕັ້ງປ້າຍ ເຂດຫວງຫ້າມເດັດຂາດ, ເຂດຄຸ້ມຄອງການນໍາໃຊ້, ເຂດກັນຊົນ ແລະ ເຂດທີ່ມີຄວາມຫຼໍ່ແຫຼມ ພ້ອມທັງສ້າງຕັ້ງຈຸດກວດກາ ຊັບພະ ຍາກອນປ່າໄມ້ ຫຼື ປ້ອມຍາມປ່າ ຕາມຈຸດຫຼໍ່ແຫຼມ ເພື່ອສະກັດກັ້ນການບຸກລຸກທໍາລາຍ ທີ່ດິນປ່າໄມ້, ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຢູ່ໃນອຸທິຍານ ແຫ່ງຊາດ ນາກາຍ-ນໍ້າເທີນ ເຊັ່ນ: ການຖາງປ່າເຮັດໄຮ່, ການຈູດປ່າ, ການລ່າເນື້ອ, ລັກລອບຕັດໄມ້, ບຸກລຸກຕັ້ງຖິ່ນຖານໃໝ່ ແລະ ການສ້າງ ຫຼື ຕັ້ງເປັນສະໜໍ່າ;

15. ສົມທົບ ແລະ ເຂົ້າຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ຕິດຕາມ, ກວດກາ ການຂຸດຄົ້ນ ແຮ່ທາດ, ໄມ້ຈາກເຂດບຸກເບີກເນື້ອທີ່ ການກໍ່ສ້າງພື້ນຖານໂຄງລ່າງ ຢູ່ໃນອຸທິຍານແຫ່ງຊາດ ນາກາຍ-ນໍ້າເທີນ ທີ່ລັດຖະບານ ໄດ້ອະນຸມັດ;

16. ເປັນໃຈກາງ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດວຽກງານການຂໍອະນຸມັດເຊົ່າ ຫຼື ສໍາປະທານ ພື້ນທີ່ຢູ່ໃນ ອຸທິຍານແຫ່ງຊາດ ນາກາຍ-ນໍ້າເທີນ ເພື່ອດໍາເນີນກິດຈະການ ທ່ອງທ່ຽວທໍາມະຊາດ ຕາມກົດໝາຍ ແລະ ລະບຽບການ;

17. ເປັນເຈົ້າການດໍາເນີນ ການກວດກາລາດຕະເວນ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ ຖ້າຫາກພົບເຫັນການລະເມີດ ລະບຽບ ກົດໝາຍ ຕ້ອງໄດ້ເກັບກໍາຂໍ້ມູນຫຼັກຖານ ເພື່ອສະໜອງໃຫ້ແກ່ເຈົ້າໜ້າທີ່ກວດກາປ່າໄມ້ ໃນການປະກອບສໍານວນສິ່ງຟ້ອງໄອຍະການ ເພື່ອໃຫ້ສານຕັດສິນດໍາເນີນຄະດີ ຕໍ່ຜູ້ກະທໍາຜິດ ຕາມຂະບວນການຍຸຕິທໍາ ຢ່າງເຂັ້ມງວດ;

18. ຍາດແຍ່ງເອົາການຮ່ວມມື ແລະ ການຊ່ວຍເຫຼືອ ດ້ານ ທຶນຮອນ, ເຕັກນິກວິທະຍາສາດ-ວິຊາການ ຈາກ ພາຍໃນ ແລະ ຕ່າງປະເທດ ເພື່ອປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດ ບັນດາ ແຜນງານ, ແຜນການ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ສູງ;
19. ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດໂຄງການ ພ້ອມທັງຕິດຕາມ, ກວດກາ ແລະ ປະເມີນຜົນ ການປະຕິບັດວຽກງານ ຂອງຊ່ຽວຊານ ພາຍໃນ ແລະ ຕ່າງປະເທດ ລວມທັງການອຳນວຍຄວາມສະດວກ ດ້ານເອກະສານທາງການ;
20. ຂື້ນແຜນງົບປະມານ, ເປີດບັນຊີ, ຄຸ້ມຄອງລະບົບ ບັນຊີ-ການເງິນ ແລະ ຊັບສິນ ຂອງລັດ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃຫ້ເປັນລະບົບ ແລະ ມີຄວາມໂປ່ງໃສ ສາມາດກວດສອບໄດ້;
21. ຊຸກຍູ້, ຕິດຕາມ, ກວດກາ, ປະເມີນຜົນ ພ້ອມທັງ ສະຫຼຸບ, ສັງລວມ ແລະ ລາຍງານປະຈຳ ອາທິດ, ເດືອນ, 3 ເດືອນ, 6 ເດືອນ, 1 ປີ, 3 ປີ ແລະ 5 ປີ ກ່ຽວກັບ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຢູ່ໃນ ອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ໃຫ້ຂັ້ນເທິງ ເປັນປົກກະຕິ, ຕໍ່ເນື່ອງ ແລະ ທັນກັບກຳນົດເວລາ;
22. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 4 ຂອບເຂດສິດ**

1. ສະເໜີ ຕໍ່ຄະນະກຳມະການບໍລິຫານ ອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ກ່ຽວກັບວຽກງານປັບປຸງກົງຈັກ ການຈັດຕັ້ງຂອງຕົນ ເຊັ່ນ: ການກຳນົດຕຳແໜ່ງງານ, ການບັນຈຸ-ສັບຊ້ອນ ແລະ ຈັດວາງ ບຸກຄະລາກອນ ຕາມການແບ່ງຂັ້ນຄຸ້ມຄອງ ຕາມກົດໝາຍ ແລະ ລະບຽບການກຳນົດ ຕາມທິດກະທັດຮັດເຂັ້ມແຂງ, ມີປະສິດທິພາບ ແລະ ຫຼີກຫຼ່ຽງກົນໄກຫຼາຍຄົນເຮັດວຽກດຽວ ລວມທັງ ການຂໍອະນຸມັດສືບຕໍ່ ຫຼື ຍົກເລີກ ສັນຍາກັບຄູ່ຮ່ວມງານ, ຊ່ຽວຊານ ທີ່ບໍ່ປະຕິບັດ ລະບຽບ ກົດໝາຍ ຂອງ ສປປ ລາວ;
2. ສະເໜີ ການປະຕິບັດນະໂຍບາຍ ເລື່ອນຊັ້ນ-ເລື່ອນຂັ້ນ ເງິນເດືອນ, ຍ້ອງຍໍ ແລະ ປະຕິບັດວິໄນ ຕໍ່ພະນັກງານ-ລັດຖະກອນ ຢູ່ໃນຄວາມຮັບຜິດຊອບ ຂອງກອງຄຸ້ມຄອງອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ;
3. ພົວພັນ ປະສານສົມທົບກັບອຳນາດການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອໄກ່ເກ່ຍ ແລະ ແກ້ໄຂ ປະກົດການຫຍໍ້ທໍ້ຕ່າງໆ ທີ່ເກີດຂຶ້ນຢູ່ໃນ ອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ;
4. ພົວພັນ, ປະສານສົມທົບ ແລະ ແລກປ່ຽນ ຂໍ້ມູນ-ຂ່າວສານ ເຊັ່ນ: ບົດບັນທຶກການຮ່ວມມື ກັບອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທາງສັງຄົມ;
5. ຈັດຕັ້ງ ແລະ ຮຽກໂຮມພະນັກງານຫຼັກແຫຼ່ງ ແລະ ວິຊາການ ໃນຄວາມຮັບຜິດຊອບຂອງຕົນ ເຂົ້າຮ່ວມກອງປະຊຸມ ຫຼື ລາຍງານວຽກເປັນແຕ່ລະໄລຍະ, ເຂົ້າຮ່ວມການວາງສະແດງ ຕາມຄວາມຮຽກຮ້ອງຕ້ອງການ ຂອງວຽກງານ, ເຂົ້າຮ່ວມ ສຳມະນາ, ຝຶກອົບຮົມ, ທັດສະນະສຶກສາ ໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ທັງພາຍໃນ ແລະ ຕ່າງປະເທດ ຕາມການແຕ່ງຕັ້ງ ຫຼື ມອບໝາຍ ຂອງຂັ້ນເທິງ ເພື່ອຍົກລະດັບຄວາມຮູ້ ຄວາມສາມາດ ຂອງພະນັກງານ-ລັດຖະກອນ;
6. ອອກແຈ້ງການ, ແຈ້ງເຊີນ ແລະ ຄຳແນະນຳ ໃຫ້ບັນດາຂະແໜງການ, ຫົວໜ່ວຍທຸລະກິດ ກະສິກຳ ແລະ ປ່າໄມ້, ຫົວໜ່ວຍທຸລະກິດອື່ນ, ບັນດາບ້ານ, ກຸ່ມບ້ານ ທີ່ຢູ່ໃນ ແລະ ອ້ອມຂ້າງ ອຸທິຍານ ແຫ່ງຊາດ ນາກາຍ-ນ້ຳເທີນ ພ້ອມທັງຈັດຕັ້ງປະຕິບັດ ການໂຄສະນາ ເຜີຍແຜ່ລະບຽບ ກົດໝາຍ, ສຳມະນາ ແລະ ຝຶກອົບຮົມ ຕາມການມອບໝາຍ ຂອງຂັ້ນເທິງ;

7. ຄຸ້ມຄອງ ແລະ ນໍາໃຊ້ອາວຸດ ເຂົ້າໃນການປະຕິບັດໜ້າທີ່ ລົງເຄື່ອນໄຫວອອກກວດກາລາດຕະເວນ ແລະ ປະຈໍາການຢູ່ພາກສະໜາມ ຕາມຈຸດກວດກາຊັບພະຍາກອນປ່າໄມ້ ເພື່ອປ້ອງກັນຕົວ ໃນເວລາສຸກເສີນ;
8. ຄົ້ນຄວ້າ ແລະ ສະເໜີທັດສະນະທາງດ້ານວິຊາການ ກ່ຽວກັບ ການຂໍອະນຸມັດ ດໍາເນີນກິດຈະການ, ການເຊົ່າ ຫຼື ສໍາປະທານ ທີ່ດິນ, ປ່າໄມ້ ຢູ່ໃນອຸທິຍານແຫ່ງຊາດ ນາກາຍ-ນໍ້າເທີນ ຕາມລະບຽບກົດໝາຍ;
9. ປະຕິບັດສິດອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກ

ກົງຈັກຂອງກອງຄຸ້ມຄອງອຸທິຍານແຫ່ງຊາດ ນາກາຍ-ນໍ້າເທີນ ປະກອບດ້ວຍ:

1. ໜ່ວຍງານ ບໍລິຫານ, ແຜນການ ແລະ ການເງິນ;
2. ໜ່ວຍງານ ວິຊາການ.

### ມາດຕາ 6 ໂຄງປະກອບບຸກຄະລາກອນ

ບຸກຄະລາກອນ ຂອງກອງຄຸ້ມຄອງອຸທິຍານ ແຫ່ງຊາດ ນາກາຍ-ນໍ້າເທີນ ປະກອບມີ:

1. ຫົວໜ້າກອງ, ຮອງຫົວໜ້າກອງ ຈໍານວນໜຶ່ງ;
2. ຫົວໜ້າໜ່ວຍງານ, ຮອງຫົວໜ້າໜ່ວຍງານ ແລະ ລັດຖະກອນວິຊາການ ຈໍານວນໜຶ່ງ ຕາມການກໍານົດຕໍາແໜ່ງງານ.

## ໝວດທີ 4
## ໜ້າທີ່ ຂອງບັນດາໜ່ວຍງານ

### ມາດຕາ 7 ໜ້າທີ່ ຂອງໜ່ວຍງານ ບໍລິຫານ, ແຜນການ ແລະ ການເງິນ

1. ຄົ້ນຄວ້າ ສ້າງ ຫຼື ປັບປຸງ ລະບຽບການ, ກົນໄກ ການຄຸ້ມຄອງ ແລະ ນໍາໃຊ້ ທຶນ, ງົບປະມານ, ຊັບສິນຂອງລັດ, ໂຄງການທີ່ຂຶ້ນກັບກອງຄຸ້ມຄອງ ອຸທິຍານແຫ່ງຊາດ ນາກາຍ-ນໍ້າເທີນ ໃຫ້ສອດຄ່ອງ ກັບພຶດຕິກໍາຕົວຈິງ ໃນແຕ່ລະໄລຍະ ເພື່ອນໍາສະເໜີຂັ້ນເທິງ ພິຈາລະນາອະນຸມັດ;
2. ເປັນໃຈກາງ ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ທັງຂັ້ນສູນກາງ, ທ້ອງຖິ່ນ ແລະ ສາກົນ ລວມທັງ ການອໍານວຍຄວາມສະດວກ ຕາມລະບຽບ ແລະ ກົດໝາຍ;
3. ເປັນໃຈກາງ ໃນການສັງລວມແຜນການລວມ, ແຜນປະຈໍາປີ, ແຜນການເຄື່ອນໄຫວວຽກງານ ປະຈໍາ 3 ເດືອນ, 6 ເດືອນ ຂອງກອງຄຸ້ມຄອງ ອຸທິຍານແຫ່ງຊາດ ນາກາຍ-ນໍ້າເທີນ ລວມທັງແຜນການຈັດຊື້ວັດຖຸອຸປະກອນຮັບໃຊ້ ໃນແຕ່ລະໄລຍະ ຕາມລະບຽບການ;
4. ເກັບກໍາຂໍ້ມູນ, ຂຶ້ນບັນຊີ, ສ້າງແຜນແບ່ງປັນ, ຄຸ້ມຄອງ, ຕິດຕາມ ແລະ ກວດກາ ທີ່ດິນ, ສິ່ງປຸກສ້າງ, ຫ້ອງການ, ພາຫະນະ, ວັດຖຸອຸປະກອນຮັບໃຊ້ ແລະ ຊັບສິນ ຂອງກອງຄຸ້ມຄອງ ອຸທິຍານ ແຫ່ງຊາດ ນາກາຍ-ນໍ້າເທີນ ໃຫ້ເປັນລະບຽບຮຽບຮ້ອຍ ແລະ ເກັບຮັກສາເຂົ້າໃນລະບົບຖານຂໍ້ມູນ ໃຫ້ເປັນລະບົບຄົບຊຸດ ສາມາດນໍາໃຊ້ໄດ້ຢ່າງຍືນຍົງ;

5. ເປັນໃຈກາງຄຸ້ມຄອງ, ນຳໃຊ້ ແລະ ເກັບຮັກສາບັນດາຊັບສິນທາງປັນຍາ ທີ່ກອງຄຸ້ມຄອງອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ຮ່ວມກັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສ້າງຂຶ້ນດ້ວຍຄວາມຮັບຜິດຊອບ;
6. ເກັບກຳສະຖິຕິ ແລະ ຊີວະປະຫວັດ ພະນັກງານ-ລັດຖະກອນ ທີ່ຂຶ້ນກັບກອງຄຸ້ມຄອງ ອຸທິຍານ ແຫ່ງຊາດ ນາກາຍ-ນ້ຳເທີນ ສ້າງເປັນຖານຂໍ້ມູນ ດ້ານບຸກຄະລາກອນ ເພື່ອຕອບສະໜອງ ເຂົ້າໃນ ການວາງແຜນ ການຄຸ້ມຄອງ-ນຳໃຊ້ ພະນັກງານ-ລັດຖະກອນ ພ້ອມທັງຊຸກຍູ້, ສົ່ງເສີມບົດບາດ ຍິງ-ຊາຍ ແລະ ພັດທະນາຄວາມກ້າວໜ້າ ຂອງແມ່-ເດັກ ໃຫ້ສອດຄ່ອງກັບພາລະບົດບາດ ຂອບເຂດສິດ ແລະ ໜ້າທີ່ ຕາມຕຳແໜ່ງງານ ທີ່ໄດ້ກຳນົດໄວ້ ລວມທັງສະຖິຕິຊ່ຽວຊານ ພາຍໃນ, ຕ່າງປະເທດ ແລະ ການອຳນວຍຄວາມສະດວກ ຕາມເງື່ອນໄຂ ແລະ ລະບຽບກົດໝາຍ;
7. ຄົ້ນຄວ້າ ແລະ ນຳສະເໜີ ຄວາມຕ້ອງການພະນັກງານ ລວມທັງ ຄວາມຕ້ອງການດ້ານວິຊາສະເພາະ ທີ່ຕ້ອງການຢາກຝຶກອົບຮົມ ຂອງພະນັກງານ ໃນແຕ່ລະໄລຍະ;
8. ຄົ້ນຄວ້າ ແລະ ນຳສະເໜີ ການປັບປຸງກົງຈັກການຈັດຕັ້ງ, ປະຕິບັດນະໂຍບາຍ ການຍ້ອງຍໍ, ສະຫວັດດີການ, ການເລື່ອນຊັ້ນ-ຂັ້ນເງິນເດືອນ ໃຫ້ພະນັກງານ-ລັດຖະກອນ ຜູ້ມີຜົນງານ ແລະ ປະຕິບັດວິໄນຕໍ່ຜູ້ລະເມີດກົດໝາຍ ວ່າດ້ວຍພະນັກງານ-ລັດຖະກອນ ແລະ ລະບຽບການອື່ນ;
9. ຮັບຜິດຊອບກວດກາຄວາມຖືກຕ້ອງ ຂອງເອກະສານຂາເຂົ້າ-ຂາອອກ ກ່ອນນຳສະເໜີ ໃຫ້ການນຳກອງຄຸ້ມຄອງອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ລົງລາຍເຊັນຮັບຮອງ, ຄຸ້ມຄອງເອກະສານ ຂາເຂົ້າ-ຂາອອກ ຂອງກອງຄຸ້ມຄອງ ອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ເພື່ອຮັບປະກັນບໍ່ໃຫ້ຕົກເຮ່ຍເສຍຫາຍ ແລະ ຮັກສາຄວາມລັບຂອງເອກະສານທາງການ;
10. ເກັບກຳ, ເກັບຮັກສາ ແລະ ເຜີຍແຜ່ ຂໍ້ມູນ-ຂ່າວສານ ກ່ຽວກັບຜົນງານການເຄື່ອນໄຫວວຽກງານ ຂອງກອງຄຸ້ມຄອງອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ຢ່າງເປັນປົກກະຕິ, ຕໍ່ເນື່ອງ ແລະ ໃນງານສຳຄັນຕ່າງໆ;
11. ຄຸ້ມຄອງການຈັດຕັ້ງປະຕິບັດໂຄງການ ພ້ອມທັງຕິດຕາມ ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ໂຄງການ, ຊ່ຽວຊານ, ພະນັກງານຝຶກງານ ຕາມສັນຍາ ແລະ ນັກສຶກສາລົງຝຶກງານ;
12. ຄົ້ນຄວ້າ ສັງລວມ ປະກອບຄຳຄິດຄຳເຫັນ ຕໍ່ບັນດາເອກະສານ ຕາມການມອບໝາຍ ແລະ ການຊີ້ນຳຂອງການນຳກອງຄຸ້ມຄອງ ອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ແລະ ຂອງຂັ້ນເທິງ;
13. ຄົ້ນຄວ້າ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບ ການນຳສະເໜີຂັ້ນເທິງ ເພື່ອຂໍອະນຸມັດ ການປະກອບອາວຸດ ໃຫ້ແກ່ກອງຄຸ້ມຄອງ ອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ;
14. ສະຫຼຸບສັງລວມ ບັນຊີ ລາຍຮັບ-ລາຍຈ່າຍ ທຶນ ແລະ ງົບປະມານຕ່າງໆ ລວມທັງຜົນການເຄື່ອນໄຫວວຽກງານ ຕາມລະບຽບການ ຢ່າງເປັນປົກກະຕິ, ຕໍ່ເນື່ອງ ແລະ ທັນເວລາ;
15. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 8 ໜ້າທີ່ ຂອງໜ່ວຍງານ ວິຊາການ**

1. ຄົ້ນຄວ້າ ສ້າງ ຫຼື ປັບປຸງ ນະໂຍບາຍ, ກຳນົດ ແຜນຍຸດທະສາດ, ນິຕິກຳລຸ່ມກົດໝາຍ, ບົດແນະນຳ, ຄູ່ມືທາງດ້ານເຕັກນິກວິຊາການ, ກົນໄກ ແລະ ລະບຽບການຄຸ້ມຄອງ ປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້, ການທ່ອງທ່ຽວທຳມະຊາດ ແບບຍືນຍົງ, ການພັດທະນາ ຊີວິດການເປັນຢູ່ຂອງປະຊາຊົນອາໄສ ຢູ່ໃນ ແລະ ອ້ອມຮອບ ອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ໃຫ້ມີຄວາມສອດຄ່ອງກັບພຶດຕິກຳຕົວຈິງ ຂອງແຕ່ລະພື້ນທີ່ ແລະ ແຕ່ລະຊົນເຜົ່າ, ການແບ່ງປັນຜົນປະໂຫຍດຈາກການດຳເນີນກິດຈະກຳ ການທ່ອງທ່ຽວ ຕາມຫຼັກການ 3 ປ ຄື: ປະສິດທິພາບ, ປະສິດທິຜົນ ແລະ

ເປັນທຳ; ຕິດຕາມ ກວດກາລາດຕະເວນ, ແກ້ໄຂປະກົດການຫຍໍ້ທໍ້ ລວມທັງ ການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ດຳເນີນຄະດີ ຕາມຂະບວນການຍຸຕິທຳ ຢ່າງເຂັ້ມງວດ ແລະ ທັນສະພາບການ ແລະ ສຶກສາຄົ້ນຄວ້າ ຊີວະນາໆພັນ ຢູ່ໃນອຸທິຍານ ແຫ່ງຊາດ ນາກາຍ-ນ້ຳເທີນ ພ້ອມທັງໂຄສະນາເຜີຍແຜ່ ປຸກຈິດສຳນຶກ ດ້ານການອະນຸລັກ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ;

2. ເປັນໃຈກາງ ດຳເນີນວຽກງານໂຄສະນາ ເຜີຍແຜ່ ເຊື່ອມຊຶມ ບັນດາກົດໝາຍ, ຄຳສັ່ງ, ດຳລັດ, ລະບຽບການ, ບົດແນະນຳ, ຄູ່ມືທາງດ້ານວິຊາການ ກ່ຽວກັບ ປ່າໄມ້, ຊີວະນາໆພັນ, ການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຢູ່ໃນ ແລະ ອ້ອມຮອບອຸທິຍານ ແຫ່ງຊາດ ນາກາຍ - ນ້ຳເທີນ;
3. ກຳນົດຖານຂໍ້ມູນ-ຂ່າວສານ ຊີວະນາໆພັນ ສຳລັບ ອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ລວມທັງການແລກປ່ຽນ ຂໍ້ມູນ-ຂ່າວສານ ຊີວະນາໆພັນ ທັງລະດັບ ຂະແໜງການ, ພາກພື້ນ ແລະ ສາກົນ ຕາມລະບຽບກົດໝາຍ;
4. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ດຳເນີນການສຳຫຼວດ, ເກັບກຳຂໍ້ມູນ ຊີວະນາໆພັນ ເພື່ອສັງລວມເຂົ້າໃນລະບົບຖານຂໍ້ມູນ ລວມທັງການຄຸ້ມຄອງ ແລະ ນຳໃຊ້ເຂົ້າໃນການສ້າງເປັນ ບົດລາຍງານ ສະຖານະພາບ, ກຳນົດ ຍຸດທະສາດ, ແຜນດຳເນີນງານ, ແຜນການ ຄຸ້ມຄອງ, ຈັດສັນ ແລະ ບົດສະເໜີແນວຄວາມຄິດໂຄງການ;
5. ເປັນເຈົ້າການ ກຳນົດແບ່ງເຂດຄຸ້ມຄອງປະເພດຕ່າງໆ, ຈັດສັນ ແລະ ຄຸ້ມຄອງ ປ່າໄມ້, ທີ່ດິນປ່າໄມ້ ແລະ ຊີວະນາໆ ພັນ ລວມທັງການກຳນົດເຂດ ສຳລັບການສຶກສາຄົ້ນຄວ້າ ແລະ ທ່ອງທ່ຽວທຳມະຊາດທີ່ສ້າງຜົນກະທົບໜ້ອຍທີ່ສຸດ ຕໍ່ປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຢູ່ໃນ ອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ;
6. ເປັນໃຈກາງປະສານສົມທົບກັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ດຳເນີນການສຶກສາ ຄົ້ນຄວ້າ ກ່ຽວກັບ ຊະນິດພັນພືດ ແລະ ສັດນ້ຳ-ສັດປ່າ ຢູ່ໃນອຸທິຍານແຫ່ງຊາດ ນາກາຍ - ນ້ຳເທີນ ຕາມລະບຽບກົດໝາຍ;
7. ເປັນໃຈກາງ ເກັບກຳຕົວຢ່າງ ແລະ ຊາກຕົວຢ່າງ ຂອງຊະນິດພັນພືດ ແລະ ສັດນ້ຳ-ສັດປ່າ ທີ່ອາໄສ ຢູ່ໃນ ອຸທິຍານແຫ່ງຊາດ ນາກາຍ - ນ້ຳເທີນ ລວມທັງການວາງສະແດງ ແລະ ການເຜີຍແຜ່ ປຸກຈິດສຳນຶກ ດ້ານອະນຸລັກ ໃຫ້ກຸ່ມເປົ້າໝາຍ ຢ່າງກວ້າງຂວາງ;
8. ຄົ້ນຄວ້າ ສ້າງ ແລະ ປັບປຸງ ນິຕິກຳລຸ່ມກົດໝາຍ ກ່ຽວກັບ ການນຳສົ່ງຕົວຢ່າງ ແລະ ຊາກຕົວຢ່າງ ຂອງຊະນິດ ພັນພືດ ແລະ ສັດນ້ຳ-ສັດປ່າ ອອກໄປສຶກສາຄົ້ນຄວ້າທາງດ້ານວິທະຍາສາດ ຢູ່ຕ່າງປະເທດ ໃຫ້ສອດຄ່ອງ ກັບກົດໝາຍ ແລະ ນຳຜົນປະໂຫຍດສູງສຸດ ມາໃຫ້ປະເທດຊາດ;
9. ເປັນໃຈກາງ ກຳນົດຫຼັກການ, ວິທີການ, ຂັ້ນຕອນ ແລະ ມາດຕະການ ສຶກສາ ຄົ້ນຄວ້າ ຊະນິດພັນພືດ ແລະ ສັດນ້ຳ-ສັດປ່າ ຢູ່ໃນອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ;
10. ເປັນໃຈກາງ ຄົ້ນຄວ້າ ການປັບປຸງ ບັນຊີຊະນິດພັນພືດ ແລະ ສັດນ້ຳ-ສັດປ່າ ຢູ່ໃນອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ໃນແຕ່ລະໄລຍະ ໃຫ້ມີຄວາມສອດຄ່ອງກັບ ລະບຽບກົດໝາຍ ແລະ ພຶດຕິກຳຕົວຈິງ;
11. ເປັນໃຈກາງ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ດຳເນີນການປະເມີນຄວາມປົກຫຸ້ມ ແລະ ການສູນເສຍປ່າໄມ້ ຢູ່ໃນອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ໃນແຕ່ລະໄລຍະ;
12. ເປັນໃຈກາງ ຄຸ້ມຄອງ ແລະ ນຳໃຊ້ ເຄື່ອງເຕັກໂນໂລຊີ, ເຄື່ອງໄອທີ ແລະ ວັດຖຸອຸປະກອນ ທັນສະໄໝ "Drone" ແລະ ອື່ນໆ ຕາມລະບຽບ ກົດໝາຍ;

13. ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ດໍາເນີນການກວດກາລາດຕະເວນ ແລະ ການຈັດຕັ້ງປະຕິບັດກົດໝາຍ ຕໍ່ຜູ້ລະເມີດ ແລະ ສະເໜີຂັ້ນເທິງ ໃຫ້ນະໂຍບາຍ ແລະ ການຍ້ອງຍໍ ຊົມເຊີຍຕໍ່ຜູ້ມີຜົນງານດີເດັ່ນ;
14. ເກັບກໍາຂໍ້ມູນ ກ່ຽວກັບ ປະກົດການຫຍໍ້ທໍ້ ແລະ ທ່າແຮງຕ່າງໆ ຢູ່ໃນອຸທິຍານ ແຫ່ງຊາດ ນາກາຍ - ນໍ້າເທີນ ພ້ອມທັງ ສັງລວມເຂົ້າໃນລະບົບຖານຂໍ້ມູນ ເພື່ອຮັບໃຊ້ເຂົ້າໃນການວາງແຜນ, ຍຸດທະສາດ ຂອງອຸທິຍານ ແຫ່ງຊາດ;
15. ເປັນໃຈກາງ ພັດທະນາເຄື່ອງ ເທັກໂນໂລຊີ ແລະ IT ເຂົ້າໃນການກວດກາລາດຕະເວນ ໂດຍນໍາໃຊ້ລະບົບ SMART ແລະ ລະບົບອື່ນ ທີ່ເໝາະສົມ ຕາມລະບຽບ ກົດໝາຍ ຢ່າງເຂັ້ມງວດ;
16. ຄົ້ນຄວ້າ ແລະ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ນໍາສະເໜີຂັ້ນເທິງ ກ່ຽວກັບ ການກໍານົດສະຖານທີ່ ແລະ ການກໍ່ສ້າງຈຸດກວດກາຊັບພະຍາກອນປ່າໄມ້ ລວມທັງເປັນໃຈກາງ ຄຸ້ມຄອງ ແລະ ນໍາໃຊ້ ຈຸດກວດກາ ຊັບພະຍາກອນປ່າໄມ້ ຢູ່ໃນ ແລະ ອ້ອມຮອບອຸທິຍານ ແຫ່ງຊາດ ນາກາຍ - ນໍ້າເທີນດ້ວຍຄວາມຮັບຜິດຊອບສູງ;
17. ເປັນໃຈກາງ ເກັບກໍາຂໍ້ມູນ ແລະ ຫຼັກຖານຕ່າງໆ ທີ່ຖືກພົບເຫັນຢູ່ບໍລິເວນເສັ້ນທາງ ລົງກວດກາລາດຕະເວນ ລວມທັງການເຮັດຫຼັກຖານ ຈໍາລອງ ເຊັ່ນ: ຮອຍຕີນສັດປ່າ ເພື່ອເປັນບ່ອນອີງໃນການສຶກສາຄົ້ນຄວ້າ;
18. ເປັນໃຈກາງ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເກັບກໍາ, ຂຶ້ນທະບຽນພາຫະນະທາງນໍ້າ "ເຮືອ" ເຄື່ອງມືຫາປາ ແລະ ສັງລວມເຂົ້າໃນລະບົບຖານຂໍ້ມູນ ລວມທັງການກວດກາ ຕິດຕາມ ປະເມີນຜົນສະຖານະພາບ ໃນແຕ່ລະໄລຍະ ເປັນປົກກະຕິ ແລະ ຕໍ່ເນື່ອງ;
19. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ, ປ້ອງກັນ ແລະ ກໍານົດແກ້ໄຂ ປະກົດການຫຍໍ້ທໍ້ ທີ່ເປັນໄພພິບັດທາງທໍາມະຊາດ "ໄພແຫ້ງແລ້ງ, ນໍ້າຖ້ວມ, ດິນຖະຫຼົ່ມ, ໄຟໄໝ້ ລາມປ່າ" ດ້ວຍຄວາມຮັບຜິດຊອບສູງ;
20. ເປັນໃຈກາງ ຂຶ້ນບັນຊີ, ຄຸ້ມຄອງ ແລະ ນໍາໃຊ້ ອາວຸດ, ວັດຖຸອຸປະກອນ ແລະ ເຄື່ອງມື ຮັບໃຊ້ວຽກງານກວດກາລາດຕະເວນ ຕາມລະບຽບກົດໝາຍ ດ້ວຍຄວາມຮັບຜິດຊອບສູງ;
21. ເປັນໃຈກາງ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແກ້ໄຂຂໍ້ຂັດແຍ່ງ ລະຫວ່າງ ປະຊາຊົນ ກັບສັດປ່າ ຢູ່ໃນອຸທິຍານແຫ່ງຊາດ ນາກາຍ-ນໍ້າເທີນ ດ້ວຍຄວາມຮັບຜິດຊອບສູງ;
22. ເປັນໃຈກາງ ກໍານົດລະບົບຖານຂໍ້ມູນ-ຂ່າວສານ ລວມທັງການເກັບກໍາຮູບພາບ ອຸປະກອນ ແລະເຄື່ອງມືຮັບໃຊ້ເຂົ້າໃນການໂຄສະນາ ເຜີຍແຜ່ ປູກຈິດສໍານຶກ ດ້ານການອະນຸລັກ ລວມທັງການ ເຜີຍແຜ່ ເຊື່ອມຊຶມ ທາງກິງ ແລະ ທາງສື່ຕ່າງໆ ດ້ວຍຫຼາຍຮູບ ຫຼາຍສີ ຢ່າງກວ້າງຂວາງ;
23. ເປັນໃຈກາງ ກໍານົດ ແລະ ຜະລິດເຄື່ອງມື, ອຸປະກອນ ແລະ ກົນໄກ ຮັບໃຊ້ເຂົ້າໃນວຽກງານ ໂຄສະນາເຜີຍແຜ່ ປູກຈິດສໍານຶກ ດ້ານການອະນຸລັກ ລວມທັງ ການຈັດຕັ້ງປະຕິບັດ ແລະ ວາງສະແດງ ໃນງານສໍາຄັນຕ່າງໆ;
24. ເປັນໃຈກາງ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກໍານົດ ແນວທາງ, ຍຸດທະສາດ ແລະ ກຸ່ມເປົ້າໝາຍ ສໍາລັບ ການດໍາເນີນວຽກງານ ໂຄສະນາ ເຜີຍແຜ່ ປູກຈິດສໍານຶກ ດ້ານການອະນຸລັກ;
25. ເປັນໃຈກາງ ກໍານົດຮູບແບບຕ່າງໆ ຂອງການໂຄສະນາ ເຜີຍແຜ່ ປູກຈິດສໍານຶກ ດ້ານການອະນຸລັກເຊັ່ນ: ລົງເຄື່ອນໄຫວຕາມບ້ານ, ກຸ່ມບ້ານ, ໂຮງຮຽນ, ສໍານັກງານ ທີ່ເປັນເປົ້າໝາຍ ແລະ ການຕັ້ງແຄ້ມຂອງນັກຮຽນ, ຊາວໜຸ່ມ, ແມ່ຍິງ ແລະ ການຈັດຕັ້ງອື່ນ ຢູ່ໃນອຸທິຍານແຫ່ງຊາດ ນາກາຍ-ນໍ້າເທີນຕາມລະບຽບ ກົດໝາຍ ແລະ ສ້າງຄວາມເຂັ້ມແຂງ ໃຫ້ແກ່ພະນັກງານ ແລະ ພາກສ່ວນທີ່ກ່ຽວຂ້ອງກ່ຽວກັບວຽກງານໂຄສະນາ ເຜີຍແຜ່ ປູກຈິດສໍານຶກ ດ້ານການອະນຸລັກ;

26. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ດຳເນີນການສ້າງ ຫຼື ປັບປຸງ ສູນຂໍ້ມູນ-ຂ່າວສານ ຂອງກອງຄຸ້ມຄອງອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ໃຫ້ມີຄວາມສອດຄ່ອງກັບພຶດຕິກຳຕົວຈິງ ໃນແຕ່ລະໄລຍະ;
27. ເປັນໃຈກາງ ຈັດຕັ້ງຜັນຂະຫຍາຍກົດໝາຍ ວ່າດ້ວຍປ່າໄມ້ ແລະ ສັດນ້ຳ-ສັດປ່າ ກ່ຽວກັບການຈັດງານສະເຫຼີມສະຫຼອງວັນສຳຄັນຕ່າງໆ ຂອງຊາດ ເຊັ່ນ: ວັນປູກຕົ້ນໄມ້, ວັນປ່ອຍປາ ແລະ ອະນຸລັກ ສັດນ້ຳສັດປ່າ ແຫ່ງຊາດ ຕາມເງື່ອນໄຂ ແລະ ທ່າແຮງ;
28. ຄົ້ນຄວ້າ ສ້າງ ແລະ ປັບປຸງ ລະບົບເວບໄຊ ແລະ ອອກແບບ ສະໄລ ບົດສະເໜີເອກະສານ ຕໍ່ກອງປະຊຸມ, ສຳມະນາ ໃຫ້ມີຄວາມສອດຄ່ອງ ທັງເປັນເອກະລັກສະເພາະ ຂອງອຸທິຍານ ແຫ່ງຊາດ ນາກາຍ - ນ້ຳເທີນ;
29. ເປັນເຈົ້າການ ປຸກລະດົມຂົນຂວາຍ ບັນດາກຸ່ມຄົນທີ່ບຸກລຸກທຳລາຍປ່າໄມ້ ແລະ ລ່າສັດປ່າ-ສັດນ້ຳເປັນອາຊີບ ເພື່ອເຮັດໃຫ້ເຂົາເຈົ້າຫັນປ່ຽນແນວຄິດ ມາຮ່ວມໃນກິດຈະກຳ ການອະນຸລັກ ປ່າໄມ້ ແລະ ສັດນ້ຳ-ສັດປ່າ;
30. ເປັນໃຈກາງ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຕິດຕາມ ກວດກາ ຜົນການຈັດຕັ້ງປະຕິບັດວຽກງານ ພ້ອມທັງສະຫຼຸບຖອດຖອນບົດຮຽນ ແລະ ນຳໃຊ້ເຂົ້າໃນການປັບປຸງ ແຜນການເຄື່ອນໄຫວວຽກງານ ໃນແຕ່ລະໄລຍະ ໃຫ້ມີປະສິດທິພາບ;
31. ເປັນໃຈກາງ ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ດຳເນີນການສຳຫຼວດ ເກັບກຳຂໍ້ມູນສະຖິຕິບ້ານ, ຄອບຄົວ, ເສດຖະກິດ - ສັງຄົມ, ການວາງແຜນນຳໃຊ້ທີ່ດິນ ແລະ ປ່າໄມ້ ຂອງປະຊາຊົນ ທີ່ອາໃສ ຢູ່ໃນ ແລະ ອ້ອມຮອບອຸທິຍານ ແຫ່ງຊາດ ນາກາຍ-ນ້ຳເທີນ ລວມທັງການເກັບຮັກສາເຂົ້າໃນລະບົບຖານຂໍ້ມູນ ເພື່ອເປັນບ່ອນອີງ ໃນການວາງແຜນ ແລະ ຍຸດທະສາດ ການສົ່ງເສີມພັດທະນາຊີວິດການເປັນຢູ່ ຂອງປະຊາຊົນບັນດາເຜົ່າ ຕາມລະບຽບ ກົດໝາຍ;
32. ເປັນໃຈກາງ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ດຳເນີນການວາງແຜນນຳໃຊ້ທີ່ດິນ, ປ່າໄມ້ ແລະ ມອບດິນ -ມອບປ່າ ໃຫ້ປະຊາຊົນ ຄຸ້ມຄອງ-ນຳໃຊ້ ຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ;
33. ເປັນໃຈກາງ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ດຳເນີນການ ກຳນົດຫຼັກການ, ລະບຽບການ, ມາດຕະການ, ເງື່ອນໄຂ ແລະ ມາດຖານ ບ້ານ ອະນຸລັກ, ພັດທະນາດ້ານກະສິກຳ ແລະ ປ່າໄມ້, ທ່ອງທ່ຽວ ທຳມະຊາດ ແລະ ອື່ນໆ ພ້ອມທັງການນຳສະເໜີຂັ້ນເທິງ ໃຫ້ນະໂຍບາຍ ຕໍ່ບ້ານ ຫຼື ຄອບຄົວ ທີ່ດີເດັ່ນ ຕາມລະບຽບການ;
34. ເປັນໃຈກາງ ກຳນົດຫຼັກການ, ລະບຽບການ, ມາດຕະການ, ເງື່ອນໄຂ ແລະ ມາດຖານ ການພັດທະນາບ້ານເປົ້າໝາຍ ທີ່ຢູ່ໃນແຜນການພັດທະນາ ຂອງກອງຄຸ້ມຄອງ ອຸທິຍານ ແຫ່ງຊາດ ນາກາຍ - ນ້ຳເທີນ ລວມທັງການກຳນົດສັນຍາວ່າດ້ວຍການສ້າງກອງທຶນພັດທະນາບ້ານ ແລະ ກອງທຶນອະນຸລັກບ້ານແບບຍືນຍົງ;
35. ເປັນໃຈກາງ ກຳນົດລະບຽບການ ກ່ຽວກັບ ການປະຕິບັດ ນະໂຍບາຍ, ຜົນປະໂຫຍດ ແລະ ການປະຕິບັດພັນທະ ຂອງປະຊາຊົນ ທີ່ມີເປົ້າໝາຍ ຈະໄດ້ຮັບການພັດທະນາຊີວິດການເປັນຢູ່ ຢ່າງລະອຽດຈະແຈ້ງ;
36. ເປັນໃຈກາງ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການສ້າງຕັ້ງກຸ່ມ ຫຼື ສະຫະກອນປະເພດຕ່າງໆ ເຊັ່ນ: ປູກຜັກປອດສານພິດ, ໄມ້ໃຫ້ໝາກ, ຊຸກຍູ້ ສົ່ງເສີມ ການປູກ - ຟື້ນຟູປ່າໄມ້, ເຄື່ອງປ່າຂອງດົງ, ກະສິກຳ ແລະ ປ່າໄມ້ ແບບປະສົມປະສານ, ຫັດຖະກຳ, ຕໍ່າແຜ່ນ, ລ້ຽງສັດ ແລະ ປາ ຕາມລະບຽບ ແລະ ກົດໝາຍ;

37. ເປັນໃຈກາງ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກໍານົດຍຸດທະສາດ ການປ້ອງກັນພະຍາດສັດ ແລະ ສັດຕູພືດ ລວມທັງການລົງຊຸກຍູ້ ແກ້ໄຂ ປະກົດການທີ່ອາດຈະເກີດຂຶ້ນ ກັບສັດລ້ຽງ ແລະ ພືດ;
38. ຄົ້ນຄວ້າ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກໍານົດລະບຽບການ ແລະ ກົນໄກ ການຕະຫຼາດ ຫຼື ການຈັດງານວາງສະແດງຜະລິດຕະພັນ ຫຼື ສິນຄ້າ ຂອງປະຊາຊົນ ກຸ່ມ ຫຼື ສະຫະກອນ ທີ່ໄດ້ຮັບ ການ ຊຸກຍູ້ ສົ່ງເສີມ;
39. ເປັນໃຈກາງ ດໍາເນີນການສໍາຫຼວດ-ຈັດສັນ ສະຖານທີ່ ແຫຼ່ງທ່ອງທ່ຽວທໍາມະຊາດ, ປະຫວັດສາດ, ວັດຖຸະນະທໍາ-ສັງຄົມ ລວມທັງການກໍານົດ ບັນດາຜະລິດຕະພັນການທ່ອງທ່ຽວທໍາມະຊາດ, ປະຫວັດສາດ, ວັດຖຸະນະທໍາ-ສັງຄົມ ທີ່ສ້າງຜົນກະທົບໜ້ອຍທີ່ສຸດຕໍ່ ປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຢູ່ໃນອຸທິຍານແຫ່ງຊາດ ນາກາຍ - ນໍ້າເທີນ;
40. ເປັນໃຈກາງ ດໍາເນີນກິດຈະການທ່ອງທ່ຽວທໍາມະຊາດ, ວັດທະນາທໍາ, ສັງຄົມ, ປະຫວັດສາດ ທີ່ເປັນເອກະລັກ ຂອງທ້ອງຖິ່ນ ຫຼື ຊົນເຜົ່າ ທີ່ອາໄສ ຢູ່ໃນ ແລະ ອ້ອມຮອບ ອຸທິຍານແຫ່ງຊາດ ນາກາຍ - ນໍ້າເທີນ;
41. ຄົ້ນຄວ້າ ສ້າງ ຫຼື ປັບປຸງ ລະບຽບ ແລະ ກົນໄກ ການເກັບລາຍຮັບ ແລະ ຄ່າບໍລິການທາງດ້ານສິ່ງແວດລ້ອມ ລວມທັງ ຄ່າເຊົ່າ ຫຼື ສໍາປະທານ ແລະ ການຫັນປ່ຽນທີ່ດິນປ່າໄມ້ ໃນກໍລະນີ ທີ່ໄດ້ຮັບອະນຸຍາດ ເປັນກໍລະນີພິເສດ ຈາກສະພາແຫ່ງຊາດ ຕາມກົດໝາຍ;
42. ເປັນໃຈກາງ ດໍາເນີນການກໍານົດລະບົບຖານຂໍ້ມູນ ກ່ຽວກັບແຫຼ່ງທ່ອງທ່ຽວແຕ່ລະປະເພດ, ກິດຈະກໍາການທ່ອງທ່ຽວ ແລະ ເກັບກໍາສະຖິຕິ ນັກທ່ອງທ່ຽວ, ຜະລິດຕະພັນການທ່ອງທ່ຽວ ທີ່ໄດ້ຮັບຄວາມນິຍົມ ໃນແຕ່ລະໄລຍະ ລວມທັງການກວດກາ ປະເມີນຜົນ ແລະ ນໍາເອົາການປະເມີນ ໄປພັດທະນາເປັນແຜນການ ແລະ ຍຸດທະສາດ ການທ່ອງທ່ຽວ ໃນຕໍ່ໜ້າ;
43. ຄົ້ນຄ້ວາ ແລະ ນໍາສະເໜີ ການນໍາກອງຄຸ້ມຄອງ ອຸທິຍານ ແຫ່ງຊາດ ນາກາຍ - ນໍ້າເທີນ ກ່ຽວກັບ ການສ້າງສູນຮັບຕ້ອນ ນັກທ່ອງທ່ຽວ, ຈຸດຊົມວິວ ແລະ ອື່ນໆ ຕາມເງື່ອນໄຂ ແລະ ທ່າແຮງທີ່ມີ ລວມທັງການສ້າງຄວາມເຂັ້ມແຂງ ໃຫ້ແກ່ພະນັກງານວິຊາການ ແລະ ປະຊາຊົນ ກ່ຽວກັບວຽກງານການທ່ອງທ່ຽວທໍາມະຊາດ, ວັດຖຸະນະທໍາ-ສັງຄົມ ແລະ ປະຫວັດສາດ;
44. ເປັນໃຈກາງ ດໍາເນີນການໂຄສະນາ ເຜີຍແຜ່ ການທ່ອງທ່ຽວທໍາມະຊາດ ດ້ວຍຮູບການຕ່າງໆ ໃຫ້ກວ້າງຂວາ ພ້ອມທັງປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການຈັດຕັ້ງປະຕິບັດ ກິດຈະກໍາການທ່ອງ ທ່ຽວ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຂະແໜງການ;
45. ສະຫຼຸບສັງລວມ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານ ໃນແຕ່ລະໄລຍະ ເພື່ອລາຍງານຂັ້ນເທິງ ເປັນປົກກະຕິ, ຕໍ່ເນື່ອງ ແລະ ທັນເວລາ;
46. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 9 ຫຼັກການ

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ກ່ຽວກັບບັນຫາລວມຂອງກອງຄຸ້ມຄອງອຸທິຍານແຫ່ງຊາດ ນາກາຍ-ນໍ້າເທີນ;

2. ປະຕິບັດລະບອບຫົວໜ້າດຽວ ຕາມລະບົບການແບ່ງຂັ້ນຄຸ້ມຄອງ ບົນພື້ນຖານການແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ສິດໃນການຕັດສິນບັນຫາໃນຂອບເຂດຄວາມຮັບຜິດຊອບຂອງຕົນ ພ້ອມທັງເສີມຂະຫຍາຍຫົວຄິດປະດິດສ້າງ ຂອງພະນັກງານ-ລັດຖະກອນທຸກລະດັບ, ນຳໃຊ້ຄວາມຮູ້ຄວາມສາມາດຂອງຕົນຢ່າງສຸດຂີດ ເພື່ອເຮັດຫຼ້ອນໜ້າທີ່ວຽກງານທີ່ຕົນໄດ້ຮັບມອບໝາຍ, ເຄົາລົບ ແລະ ປະຕິບັດກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ;
3. ທຸກການເຄື່ອນໄຫວຂອງກອງຄຸ້ມຄອງອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ແລະ ພະນັກງານ-ລັດຖະກອນ ແມ່ນອີງໃສ່ລະບຽບກົດໝາຍ ແລະ ຫຼັກການລວມຂອງລັດຖະບານ, ນຳເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

### ມາດຕາ 10 ແບບແຜນວິທີເຮັດວຽກ

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການອັນລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ເປົ້າໝາຍ ໃນແຕ່ລະໄລຍະ ປະສານສົມທົບກັບຂະແໜງການກະສິກຳ ແລະ ປ່າໄມ້ ແລະ ຂະແໜງການອື່ນ ທັງສູນກາງ ແລະ ທ້ອງຖິ່ນ ຢ່າງແໜ້ນແຟ້ນ ແນໃສ່ໝູນໃຊ້ກຳລັງແຮງສັງລວມ ຂອງທຸກພາກສ່ວນ ເພື່ອພັດທະນາວຽກງານກະສິກຳ ແລະ ປ່າໄມ້ ໃຫ້ມີຄວາມຍືນຍົງ;
2. ຫົວໜ້າກອງ ມີຄວາມຮັບຜິດຊອບໂດຍກົງຕໍ່ການນຳ ຂອງກະຊວງກະສິກຳ ແລະ ປ່າໄມ້, ກົມປ່າໄມ້ , ຄະນະພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງ ໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນ, ຮອງຫົວໜ້າກອງ ມີໜ້າທີ່ຊ່ວຍວຽກ ແລະ ລົງເລິກຮັບຜິດຊອບວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ມອບໝາຍ ຂອງຫົວໜ້າກອງ;
3. ຫົວໜ້າກອງ ເປັນຜູ້ມີຄຳເຫັນຕໍ່ເອກະສານ ຂາເຂົ້າ-ຂາອອກ ທັງໝົດ ແລະ ລົງລາຍເຊັນ ຕໍ່ເອກະສານສຳຄັນ, ກໍລະນີຕິດຂັດ ຫຼື ໄປເຄື່ອນໄຫວວຽກງານທາງລັດຖະການ ຕ້ອງມອບສິດປະຈຳການຊົ່ວຄາວໃຫ້ແກ່ ຮອງຫົວໜ້າກອງ ຜູ້ໃດຜູ້ໜຶ່ງຮັກສາການແທນ; ໃນເມື່ອຫົວໜ້າກອງ ກັບຄືນມາປະຈຳການແລ້ວ ຜູ້ຮັກສາການແທນ ຕ້ອງລາຍງານວຽກທີ່ຕົນເອງໄດ້ແກ້ໄຂ ແລະ ວຽກທີ່ຄົງຄ້າງ ໃຫ້ຫົວໜ້າກອງ ຮັບຊາບ ພາຍໃນ 1 ວັນ ລັດຖະການ;
4. ພົວພັນ ແລະ ສົມທົບແໜ້ນກັບພາກສ່ວນທີ່ກ່ຽວຂ້ອງ ແລະ ຂະແໜງການກະສິກຳ ແລະ ປ່າໄມ້ ເພື່ອຈັດຕັ້ງປະຕິບັດວຽກງານ ໃຫ້ສຳເລັດຜົນ ຕາມເປົ້າໝາຍທີ່ກຳນົດໄວ້;
5. ເຮັດວຽກມີການກວດກາ, ຕິດຕາມ, ຊຸກຍູ້, ສະຫຼຸບ, ຖອດຖອນບົດຮຽນ, ຕີລາຄາຜົນໄດ້ຮັບ ແລະ ຜົນເສຍ ພ້ອມທັງປະຕິບັດລະບອບການລາຍງານ ສ່ອງແສງ ຢ່າງເຂັ້ມງວດ;
6. ປະຕິບັດລະບອບປະຊຸມ, ສ່ອງແສງ, ລາຍງານ ປະຈຳ ອາທິດ, ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ ປະຈຳປີ ຫຼື ກອງປະຊຸມວິຊາການ ລວມທັງການປະຕິບັດລະບອບລາຍງານ ພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງຕາມລະບຽບຫຼັກການ ຢ່າງເຂັ້ມງວດ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

### ມາດຕາ 11 ງົບປະມານ, ເຄື່ອງແບບ ແລະ ຕາປະທັບ

ກອງຄຸ້ມຄອງ ອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ມີງົບປະມານ, ເຄື່ອງແບບ ແລະ ຕາປະທັບ ເປັນຂອງຕົນເອງ ເພື່ອຮັບໃຊ້ເຂົ້າໃນການເຄື່ອນໄຫວວຽກງານ ທາງລັດຖະການ ຕາມກົດໝາຍ ແລະ ລະບຽບການກຳນົດ.

**ມາດຕາ 12  ການເຜີຍແຜ່** 

ມອບໃຫ້ຫົວໜ້າກອງຄຸ້ມຄອງອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ເປັນຜູ້ເຜີຍແຜ່ເນື້ອໃນ ທີ່ກຳນົດໄວ້ໃນໝວດທີ 4 ຂອງຂໍ້ຕົກລົງສະບັບນີ້ ໃຫ້ລະອຽດ, ຈະແຈ້ງ, ຮັດກຸມ ແລະ ເໝາະສົມ ເພື່ອຮັບປະກັນໃຫ້ແກ່ການການກຳນົດຕຳແໜ່ງງານ ໃຫ້ໄດ້ຮັບຜົນດີ.

**ມາດຕາ 13  ການຈັດຕັ້ງປະຕິບັດ**

ກອງຄຸ້ມຄອງ ອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ, ຫ້ອງການ, ບັນດາກົມ, ບັນດາອົງການລັດທຽບເທົ່າກົມ, ບັນດາພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ, ນະຄອນຫຼວງວຽງຈັນ, ບັນດາຫ້ອງການກະສິກຳ ແລະ ປ່າໄມ້ ປະຈຳເມືອງ, ອົງການປົກຄອງທ້ອງຖິ່ນ, ອົງການຈັດຕັ້ງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 14  ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້

ບຸນຂວາງ ຄຳບຸນເຮືອງ